**ມິຊຊາອາທິດທີ 6 ກຳນົດປາສກາ**

**ວັນທີ 9 ພຶດສະພາ 2021**



**ພຣະວໍລະສານໂດຍນັກບຸນຢວງ 15, 9-17**

ເວລາທີ່ພຣະເຢຊູຈາກໂລກເມືອຫາພຣະບິດາໃກ້ຈະມາເຖິງ, ພຣະອົງກ່າວແກ່ພວກລູກສິດວ່າ: "ພຣະບິດາຮັກເຮົາແນວໃດ, ເຮົາກໍຮັກພວກເຈົ້າແນວນັ້ນ. ຈົ່ງຕັ້ງໝັ້ນຢູ່ໃນຄວາມຮັກຂອງເຮົາເຖີດ. ຖ້າພວກເຈົ້າຖືຕາມພຣະບັນຍັດຂອງເຮົາ, ກໍແມ່ນພວກເຈົ້າຕັ້ງໝັ້ນຢູ່ໃນຄວາມຮັກຂອງເຮົາ. ຢ່າງດຽວກັນກັບເຮົາໄດ້ຖືຕາມພຣະບັນຍັດຂອງພຣະບິດາຂອງເຮົາ, ແລະເຮົາກໍຕັ້ງໝັ້ນຄົງຢູ່ໃນຄວາມຮັກຂອງພຣະອົງ. ເຮົາບອກຂໍ້ຄວາມນີ້ແກ່ພວກເຈົ້າ ເພື່ອໃຫ້ຄວາມຍິນດີຂອງເຮົາຕັ້ງໝັ້ນຢູ່ໃນພວກເຈົ້າ, ແລະຄວາມຍິນດີຂອງພວກເຈົ້າຈະບໍລິບູນ."

"ນີ້ແມ່ນພຣະບັນຍັດຂອງເຮົາຄື ໃຫ້ພວກເຈົ້າຮັກກັນແລະກັນ ຄືເຮົາໄດ້ຮັກພວກເຈົ້າ. ບໍ່ມີຄວາມຮັກອັນໃດຍິ່ງໃຫຍ່ກວ່າການສະລະຊີວິດຂອງຕົນເພື່ອມິດສະຫາຍ. ຖ້າພວກເຈົ້າທຳຕາມທີ່ເຮົາສັ່ງ, ພວກເຈົ້າກໍຈະເປັນມິດສະຫາຍຂອງເຮົາ. ເຮົາບໍ່ເອີ້ນພວກເຈົ້າວ່າຄົນໃຊ້ອີກແລ້ວ. ຍ້ອນຄົນໃຊ້ບໍ່ຮູ້ຈັກວ່ານາຍຈະເຮັດຫຍັງ. ແຕ່ເຮົາເອີ້ນພວກເຈົ້າວ່າມິດສະຫາຍ. ຍ້ອນວ່າທຸກສິ່ງທີ່ເຮົາຮູ້ຈາກພຣະບິດາຂອງເຮົາ, ເຮົາກໍໄດ້ໃຫ້ພວກເຈົ້າຮູ້ນຳ. ບໍ່ແມ່ນພວກເຈົ້າໄດ້ເລືອກເອົາເຮົາ, ແຕ່ແມ່ນເຮົາໄດ້ເລືອກເອົາພວກເຈົ້າ, ແລະໄດ້ແຕ່ງຕັ້ງພວກເຈົ້າໃຫ້ໄປແລະເກີດໝາກຜົນ. ແລະແມ່ນໝາກຜົນທີ່ໝັ້ນຄົງຖາວອນ. ແລ້ວທຸກສິ່ງທີ່ພວກເຈົ້າວອນຂໍນຳພຣະບິດາໃນນາມຂອງເຮົາ, ພຣະອົງກໍຈະປະທານໃຫ້. ຄຳສັ່ງຂອງເຮົາຄືໃຫ້ພວກເຈົ້າຮັກກັນແລະກັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ໃນບົດອ່ານທີໜຶ່ງຈາກໜັງສືຂອງພວກອັກຄະທຳມະທູດ, ພວກເຮົາເຫັນວ່າພວກອັກຄະສາວົກ, ເປັນຕົ້ນນັກບຸນເປໂຕກຳລັງປະຕິບັດຕາມຄຳສັ່ງບອກຂອພຣະເຢຊູເຈົ້າຫລັງຈາກພຣະອົງໄດ້ກັບເປັນຄືນມາວ່າ: ຈົ່ງໄປທົ່ວໂລກແລະທຳໃຫ້ທຸກຊາດທຸກພາສາມາເປັນສິດຂອງເຮົາ. ດ້ວຍການໂຜດສິນລ້າງບາບໃຫ້ພວກເຂົາ: ເດຊະພຣະນາມພຣະບິດາ ແລະພຣະບຸດ ແລະພຣະຈິດ. ແລະວັນນີ້, ນັກບຸນເປໂຕກໍໄດ້ໂຜດສິນລ້າງບາບໃຫ້ກອກເນລີໂອ ຜູ້ເປັນຄົນຕ່າງສາດສະໜາ ພ້ອມກັບຄົນອື່ນ.ແລະຈາກນັ້ນພວກເຂົາກໍໄດ້ຮັບພຣະຈິດຂອງພຣະເຈົ້າ.

ການທີ່ພວກສາວົກທຳໃຫ້ຄົນຕ່າງສາດສະໜາໄດ້ຮູ້ຈັກພຣະເຢຊູເຈົ້າແລະມາເປັນສິດຂອງພຣະອົງນີ້ແມ່ນການປະກາດເຖິງຄວາມຮັກຂອງພຣະບິດາເຈົ້າທີ່ມີຕໍ່ພວກເຂົາແລະຕໍ່ທຸກຄົນຜ່ານທາງພຣະເອກະບຸດຂອງພຣະອົງຄືພຣະເຢຊູກຣິສໂຕເຈົ້າ.ແລະພຣະເຢຊູເຈົ້າໄດ້ສະແດງຄວາມຮັກຂອງພຣະບິດາເຈົ້າໃຫ້ພວກເຮົາຮູ້ຈັກຜ່ານທາງການຕາຍຂອງພຣະອົງບົນໄມ້ກາງເຂນເພື່ອໄຖ່ບາບພວກເຮົາ.ດັ່ງທີ່ນັກບຸນຢວງໄດ້ກ່າວໃນບົດອ່ານທີສອງຂອງວັນນີ້.

ສ່ວນໃນພຣະວໍລະສານ,ພຣະເຢຊູເຈົ້າກໍເປັນພິຍານເຖິງຄວາມຮັກຂອງພຣະບິດາຕໍ່ໜ້າພວກລູກສິດໃນອາຫານຄ່ຳຄັ້ງສຸດທ້າຍກ່ອນທີ່ພຣະອົງຈະຖືກຈັບ, ຮັບທໍລະມານ ແລະຕາຍ. ພຣະເຢຊູເຈົ້າກ່າວກັບພວກລູກສິດວ່າຜູ້ໃດຢູ່ໃນຄວາມຮັກ, ຜູ້ນັ້ນກໍຢູ່ໃນພຣະເຈົ້າ. ແລະຜູ້ທີ່ຢູ່ໃນພຣະເຈົ້າຄືຜູ້ທີ່ປະຕິບັດຕາມພຣະທຳບັນຍັດຂອງພຣະອົງ. ແລະພຣະທຳບັນຍັດຂອງພຣະອົງຄືໃຫ້ພວກເຈົ້າຮັກກັນແລະກັນຄືເຮົາໄດ້ຮັກພວກເຈົ້າ. ໝາຍວ່າສິ່ງທີ່ພຣະເຢຊູເຈົ້າສັ່ງສອນຝູງຊົນແລະພວກລູກສິດຕະຫລອດສາມປີນັ້ນແມ່ນການໄຂສຳແດງເຖິງຄວາມຮັກທີ່ພຣະບິດາເຈົ້າມີຕໍ່ພວກເຂົາ.ແລະສິ່ງທີ່ພຣະເຢຊູເຈົ້າສັ່ງພວກລູກສິດໄວ້ກ່ອນທີ່ພຣະອົງຈະສິ້ນຊີວິດນັ້ນຄືໃຫ້ພວກເຂົາຮັກກັນແລະກັນ.

ວັນນີ້, ກໍເປັນໂອກາດໃຫ້ພວກເຮົາຜູ້ເປັນສິດຂອງພຣະເຢຊູເຈົ້າໄດ້ຖາມຕົວເອງວ່າ ຂ້ອຍໄດ້ປະຕິບັດຕາມບັນຍັດແຫ່ງຮັກຂອງພຣະເຢຊູເຈົ້າໃນຊີວິດຂອງຂ້ອຍບໍ? ໃນຄອບຄົວ, ໃນສັງຄົມກັບຜູ້ທີ່ຢູ່ຄຽງຂ້າງຂ້ອຍບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ ລູກຂໍຂອບພຣະຄຸນພຣະອົງສຳລັບຄວາມຮັກທີ່ພຣະອົງຊົງມີຕໍ່ລູກ. ໂຜດຊ່ວຍລູກໃຫ້ເປັນພິຍານເຖິງຄວາມຮັກນີ້ໃນຊີວິດຂອງລູກດ້ວຍເທີ້ນ. ເພື່ອທຸກຄົນຈະໄດ້ຮູ້ຈັກຄວາມຮັກທີ່ພຣະອົງມີຕໍ່ພວກເຂົາ ແລະມາເປັນສິດຂອງພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ